ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ລັດຖະບານ

ເລກທີ 169 /ລບ

ນະຄອນຫຼວງວຽງຈັນ, ວັນທີ 19-6-2013

# ດຳລັດ
# ວ່າດ້ວຍສັງຄົມສົງເຄາະ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມໜັງສືສະເໜີຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2170/ຮສສ, ລົງວັນທີ 27 ພຶດສະພາ 2013.

## ລັດຖະບານ ອອກດຳລັດ :

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍສັງຄົມສົງເຄາະ ໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດ ເພື່ອໃຫ້ໄດ້ຮັບການຊ່ວຍເຫລືອ ແລະ ການບໍລິການຢ່າງມີປະສິດທິພາບ, ປະສິດທິຜົນ, ເປັນທຳ ແລະ ທົ່ວເຖິງ, ແນໃສ່ແກ້ໄຂຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ, ຮັບປະກັນເງື່ອນໄຂການດຳລົງຊີວິດ ໃນຂັ້ນພື້ນຖານປະກອບສ່ວນເຂົ້າໃນການປະຕິບັດແຜນການລຶບລ້າງຄວາມທຸກຍາກ ທີ່ລັດຖະບານ ວາງອອກ.

**ມາດຕາ 2. ສັງຄົມສົງເຄາະ**

ສັງຄົມສົງເຄາະ ແມ່ນການປະຕິບັດນະໂຍບາຍການຊ່ວຍເຫລືອ ແລະ ການບໍລິການດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດໃນສັງຄົມ ໂດຍການປະກອບສ່ວນຂອງລັດ, ບຸກຄົນ, ນິຕິບຸກຄົນ, ຊຸມຊົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັງຄົມ** ຫມາຍເຖິງ ການພົວພັນລະຫວ່າງຄົນກັບຄົນ, ກຸ່ມຄົນ, ຊຸມຊົນ ຫລື ການຈັດຕັ້ງຢູ່ໃນສັງຄົມ;
2. **ສົງເຄາະ** ຫມາຍເຖິງ ການໃຫ້ການຊ່ວຍເຫລືອ ແລະ ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການດ້ານວັດຖຸ ແລະ ຈິດໃຈ;
3. **ເດັກທີ່ຕ້ອງການການປົກປ້ອງພິເສດ** ໝາຍເຖິງ ເດັກກຳພ້າ, ກຳພອຍ, ເດັກທີ່ຖືກປະຖິ້ມ, ເດັກທີ່ຖືກທຳຮ້າຍຮ່າງກາຍ, ເດັກທີ່ຖືກຂູດຮີດ ແລະ ທາລຸນທາງເພດ, ເດັກທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ, ເດັກທີ່ເຮັດວຽກຢູ່ໃນສະພາບທີ່ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ, ຊີວິດ ຫລື ຖືກຂູດຮີດແຮງງານ, ເດັກທີ່ຕິດຢາເສບຕິດ ແລະ ເດັກທີ່ບໍ່ໄດ້ຮັບຄວາມຍຸຕິທຳໃນການດຳເນີນຄະດີ;
4. **ເດັກທີ່ຕົກຢູ່ໃນຄວາມສ່ຽງ** ໝາຍເຖິງ ເດັກທີ່ດຳລົງຊີວິດຢູ່ໃນສະພາບທີ່ເຮັດໃຫ້ເດັກເສຍໂອກາດ, ມີຄວາມອັນຕະລາຍ ແຕ່ຍັງບໍ່ທັນສົ່ງຜົນກະທົບຕໍ່ການພັດທະນາຂອງເດັກ;
5. **ດ້ອຍໂອກາດ** ໝາຍເຖິງ ການຂາດເງື່ອນໄຂໃນການເຂົ້າເຖິງການບໍລິການທາງດ້ານການສຶກສາ, ວິຊາຊີບ, ການປິ່ນປົວສຸຂະພາບ, ການໃຫ້ຄຳປຶກສາທາງດ້ານຈິດໃຈ, ສະບຽງອາຫານ, ເຄື່ອງໃຊ້ສອຍ ແລະ ທີ່ຢູ່ອາໄສ;
6. **ໄພພິບັດ** ໝາຍເຖິງ ໄພອັນຕະລາຍທີ່ເກີດຂຶ້ນຈາກທຳມະຊາດ ແລະ ການກະທຳຂອງມະນຸດ ເຊັ່ນ: ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວ, ໝາກເຫັບຕົກ, ດິນເຈື່ອນ, ແຜ່ນດິນໄຫວ, ພູເຂົາໄຟລະເບີດ ຊຶ່ງໄດ້ເກີດຂຶ້ນ ແລະ ສ້າງຄວາມເສຍຫາຍຕໍ່ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ;
7. **ການຊ່ວຍເຫລືອສຸກເສີນ** ໝາຍເຖິງ ການກູ້ຊີວິດ, ຊັບສິນຂອງພົນລະເມືອງ ແລະ ການບັນເທົາທຸກແກ່ຜູ້ກຳລັງປະສົບໄພພິບັດ;
8. **ວັດຖຸທີ່ໃຊ້ໃນການສົງເຄາະ** ໝາຍເຖິງ ສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ສິ່ງປຸກສ້າງ ແລະ ເຄື່ອງມືປະກອບອາຊີບ.

**ມາດຕາ 4. ພັນທະຂອງພົນລະເມືອງ**

ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ມີພັນທະໃນການປະກອບສ່ວນເຂົ້າໃນວຽກງານສັງຄົມສົງເຄາະ.

**ມາດຕາ 5. ຫລັກການພື້ນຖານຂອງວຽກງານສັງຄົມສົງເຄາະ**

ວຽກງານສັງຄົມສົງເຄາະ ໃຫ້ປະຕິບັດຕາມຫລັກການພື້ນຖານ ດັ່ງນີ້:

1. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງກຸ່ມເປົ້າໝາຍ ;
2. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ.

ມາດຕາ 6. ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງ, ນິຕິບຸກຄົນ, ຄອບຄົວ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງວຽກງານສັງຄົມສົງເຄາະ.

## ໝວດທີ 2

## ເປົ້າໝາຍ, ວິທີການ ແລະ ຮູບແບບການສົງເຄາະ

ມາດຕາ 7. **ເປົ້າໝາຍທີ່ໄດ້ຮັບການສົງເຄາະ**

ເປົ້າໝາຍທີ່ຈະໄດ້ຮັບການສົງເຄາະ ມີດັ່ງນີ້:

1. ເດັກກຳພ້າ, ກຳພອຍ ອາຍຸຕ່ຳກວ່າ 18 ປີ, ຂາດທີ່ເພິ່ງອາໄສ, ຂາດຜູ້ດູແລ ຫລື ອາໄສຢູ່ນຳຄອບຄົວທີ່ທຸກຍາກ;
2. ຜູ້ພິການທາງດ້ານຮ່າງກາຍ ຫລື ມັນສະໝອງ ບໍ່ສາມາດກຸ້ມຕົນເອງໄດ້ ທີ່ຂາດຜູ້ດູແລ ຫລື ອາໄສຢູ່ ນຳຄອບຄົວທີ່ທຸກຍາກ;
3. ຜູ້ອາຍຸສູງ ຫົກສິບ ປີຂື້ນໄປ ທີ່ປ່ຽວພອຍ, ທຸກຍາກ ຫລື ອາໄສ ຢູ່ນຳຄອບຄົວທີ່ທຸກຍາກ;
4. ຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ທຸກຍາກ ຫລື ຕິດແປດພະຍາດ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດ;
5. ບຸກຄົນ ຫລື ຄອບຄົວ ທີ່ປະສົບໄພເຄາະຮ້າຍຈາກໄພພິບັດ.

ມາດຕາ 8. **ວິທີການສົງເຄາະ**

ວິທີການສົງເຄາະປະກອບມີ 2 ວິທີ ຄື: ວິທີສຸກເສີນ ແລະ ວິທີປົກກະຕິ .

1. **ວິທີສຸກເສີນ** ແມ່ນການຊ່ວຍເຫລືອໂດຍທັນທີແກ່ຜູ້ປະສົບເຄາະຮ້າຍ ຈາກໄພພິບັດທີ່ເກີດຂື້ນ;
2. **ວິທີປົກກະຕິ** ແມ່ນການຊ່ວຍເຫລືອໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດ ແລະ ຜູ້ດ້ອຍໂອກາດ ຫລັງໄດ້ຮັບຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງ;
3. ການສືບຕໍ່ໃຫ້ການຊ່ວຍເຫລືອແຕ່ລະຄັ້ງ ຕ້ອງມີການທົບທວນຄືນກ່ຽວກັບເງື່ອນໄຂຂອງບຸກຄົນ ແລະ ຄອບຄົວ ຢ່າງເປັນລາຍລັກອັກສອນຈາກພາກສ່ວນກ່ຽວຂ້ອງ.

ມາດຕາ 9. **ຮູບແບບການສົງເຄາະ**

ຮູບແບບການສົງເຄາະປະກອບດ້ວຍ:

1. ຊ່ວຍເປັນເງິນ ຫລື ເປັນວັດຖຸ;
2. ຊ່ວຍຍົກຍ້າຍໄປຢູ່ສະຖານທີ່ປອດໄພ;
3. ຊ່ວຍເບິ່ງແຍງ, ລ້ຽງດູຊີວິດການເປັນຢູ່ ແລະ ສຸຂະພາບ;
4. ຊ່ວຍຝຶກອົບຮົມວິຊາຊີບ.